# ການປົກປ້ອງການແກ້ແຄ້ນພະນັກງານໃນໄລຍະການແພ່ລະບາດໂຄວິດ-19

ທ່ານໄດ້ຮັບການຄຸ້ມຄອງໂດຍກົດໝາຍ. ສຳນັກງານກຳມາທິການແຮງງານສາມາດຊ່ວຍທ່ານໄດ້.

## ການແກ້ແຄ້ນແມ່ນຫຍັງ?

ຖ້າຫາກທ່ານຖືກໄລ່ອອກ ຫຼື ລາຍໄດ້ຂອງທ່ານ ຫຼື ຊົ່ວໂມງເຮັດວຽກຂອງທ່ານຫຼຸດລົງເນື່ອງຈາກການໃຊ້ສິດແຮງງານພາຍໃຕ້ກົດໝາຍຂອງຄາລິຟໍເນຍ, ນັ້ນແມ່ນການແກ້ແຄ້ນ ແລະ ມັນຜິດກົດໝາຍ. ນອກນັ້ນມັນຍັງຜິດກົດໝາຍທີ່ນາຍຈ້າງຂອງທ່ານຂົ່ມຂູ່ວ່າຈະລາຍງານທ່ານແກ່ໜ່ວຍງານກວດຄົນເຂົ້າເມືອງສຳລັບກົດໝາຍຄາລິຟໍເນຍດັ່ງຕໍ່ໄປນີ້. ພະນັກງານທຸກຄົນໃນຄາລິຟໍເນຍໄດ້ຮັບການຄຸ້ມຄອງໂດຍກົດໝາຍແຮງງານ, ລວມເອົາການປົກປ້ອງຈາກການແກ້ແຄ້ນໂດຍບໍ່ກ່ຽວຂ້ອງກັບສະຖານະການເຂົ້າເມືອງຂອງທ່ານ. ສິ່ງເຫຼົ່ານີ້ຍັງຄົງເປັນສິດ ແລະ ການຄຸ້ມຄອງຂອງທ່ານຕໍ່ໄປໃນໄລຍະການແພ່ລະບາດຂອງໂຄວິດ-19.

ກິດຈະກຳທີ່ໄດ້ຮັບການຄຸ້ມຄອງຈາກການແກ້ແຄ້ນພາຍໃຕ້ກົດໝາຍຄາລິຟໍເນຍມີຄື:

- ການເວົ້າເຖິງສະພາບທີ່ບໍ່ປອດໄພ ຫຼື ບໍ່ໄດ້ຮັບຄ່າຈ້າງ
- ການປະຕິເສດທີ່ຈະເຮັດວຽກພາຍໃຕ້ສະພາບເງື່ອນໄຂທີ່ບໍ່ປອດໄພ
- ການລາຍງານກ່ຽວກັບບ່ອນເຮັດວຽກທີ່ບໍ່ປອດໄພ ຫຼື ການລະເມີດກົດໝາຍແຮງງານ
- ການຍື່ນຂໍຮັບເງິນຄ່າຈ້າງສຳລັບຄ່າຈ້າງທີ່ຍັງບໍ່ໄດ້ຈ່າຍ
- **ການຊ່ວຍເຫຼືອໃນການສືບສວນນາຍຈ້າງຂອງທ່ານ**

## ຈະເກີດຫຍັງຂຶ້ນຖ້າຫາກນາຍຈ້າງຂອງຂ້ອຍຫຼຸດຊົ່ວໂມງການເຮັດວຽກຂອງຂ້ອຍ, ໄລ່ອອກ ຫຼື ຂົ່ມຂູ່ວ່າຈະໂທຫາຫ້ອງການກວດຄົນເຂົ້າເມືອງ?

ຖ້າຫາກນາຍຈ້າງລົງໂທດທ່ານ, ພວກເຂົາອາດຈະຖືກຂໍໃຫ້ຄືນວຽກໃຫ້ແກ່ທ່ານ, ຈ່າຍຄ່າຈ້າງທີ່ທ່ານສູນເສຍ ແລະ/ຫຼື ຈ່າຍຄ່າປັບໃໝ.

## ວິທີຍື່ນການຮ້ອງທຸກກ່ຽວກັບການແກ້ແຄ້ນ:

ສຳນັກງານກຳມາທິການແຮງງານຈະບໍ່ຖາມກ່ຽວກັບສະຖານະການເຂົ້າເມືອງຂອງທ່ານ ຫຼື ລາຍງານສະຖານະການເຂົ້າເມືອງຂອງທ່ານໃຫ້ກັບອົງກອນອື່ນໆຂອງລັດ.

- ທາງອອນລາຍທີ່ **dir.ca.gov/dlse/dlseRetaliation.html**
- ດ້ວຍຕົນເອງໄດ້ໃນສະຖານທີ່ໃດໜຶ່ງຂອງສຳນັກງານກຳມາທິການແຮງງານ. ຄົ້ນຫາໄດ້ທີ່ **dir.ca.gov/dlse/districtoffices.htm**
- ໂດຍໂທລະສັບທີ່ **833-526-4636**
- ໂດຍອີເມວທີ່ **retaliation@dir.ca.gov**

### ແນວທາງປະຕິບັດທີ່ດີທີ່ສຸດໃນການປົກປ້ອງຕົນເອງຈາກການແກ້ແຄ້ນ:

**ເອກະສານ**

- ການປ່ຽນສະພາບເງື່ອນໄຂການຈ້າງງານ
- ລາຍລະອຽດຂອງການຂົ່ມຂູ່
- ການສື່ສານລະຫວ່າງທ່ານ ແລະ ນາຍຈ້າງຂອງທ່ານ

**ການລະບຸຕົວຕົນ**

- ພະຍານຜູ້ທີ່ໄດ້ຍິນ ຫຼື ໄດ້ເຫັນ

**ຍື່ນເອກະສານ**

- ພາຍໃນໜຶ່ງປີທີ່ມີການແກ້ແຄ້ນ
- ສົ່ງເອກະສານ ຫຼື ຂໍ້ມູນໃຫ້ສຳນັກງານກຳມາທິການແຮງງານ
- ໂທ ຫຼື ສົ່ງອີເມວ, ຖ້າຫາກທ່ານຕ້ອງການຄວາມຊ່ວຍເຫຼືອເພີ່ມເຕີມ ແລະ ອື່ນໆ.

SAFER AT WORK · CALIFORNIA ALL · saferatwork.ca.gov